**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****************************

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ເລກທີ 416/ຖວ

# ຂໍ້ກຳນົດຂອງລັດຖະມົນຕີ

## ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ
## ກ່ຽວກັບການຄຸ້ມຄອງເນື້ອໃນ ແລະ ຂໍ້ມູນ-ຂ່າວສານ
## ທີ່ຜ່ານລະບົບອິນເຕີແນັດ

ປະຕິບັດຕາມ ດຳລັດເລກທີ 116/ນຍ ລົງວັນທີ 28 / 11 / 97 ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງຕາໜ່າງ, ການນຳເຂົ້າ, ການນຳໃຊ້ ແລະ ການຄຸ້ມຄອງລະບົບອິນເຕີແນັດ.

**ລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ອອກຂໍ້ກຳນົດກ່ຽວກັບການຄຸ້ມຄອງເນື້ອໃນ ແລະ ຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ ດັ່ງນີ້:**

## ໝວດທີ I
## ຂໍ້ກຳນົດທົ່ວໄປ

**ມາດຕາ 1**: ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ອະນຸມັດດ້ານເນື້ອໃນ ແລະ ລາຍການຂໍ້ມູນ-ຂ່າວສານ ໃຫ້ຜູ້ຈ່ອງພ້ອມທັງຄວບຄຸມເນື້ອໃນຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ.

**ມາດຕາ 2**: ການຄຸ້ມຄອງເນື້ອໃນ ແລະ ຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ ແມ່ນລະບຽບການອັນຈຳເປັນ ເພື່ອເຮັດໃຫ້ການນຳໃຊ້ລະບົບອິນເຕີແນັດ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ເປັນປະໂຫຍດແກ່ການພັດທະນາເສດຖະກິດ-ສັງຄົມ.

## ໝວດທີ II
## ການຄຸ້ມຄອງ ແລະ ນຳໃຊ້ເນື້ອໃນຂໍ້ມູນ-ຂ່າວສານ

**ມາດຕາ 3**: ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ຄຸ້ມຄອງດ້ານເນື້ອໃນ, ຮູບການ ແລະ ວິທີການນຳໃຊ້ຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດຕາມພາລະບົດບາດ ແລະ ໜ້າທີ່ ຂອງແຕ່ລະອົງການ ວິຊາການຂອງຕົນ ໂດຍສອດຄ່ອງກັບທັດສະນະ, ແນວທາງ ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ໃນແຕ່ລະໄລຍະ.

**ມາດຕາ 4**: ການຮັບ ແລະ ການປ້ອນເນື້ອໃນຂໍ້ມູນ-ຂ່າວສານ ໂດຍຜ່ານລະບົບອິນເຕີແນັດນັ້ນ ຕ້ອງແມ່ນເນື້ອໃນ ແລະ ຂໍ້ມູນ-ຂ່າວສານ ທີ່ເປັນປະໂຫຍດຕໍ່ສັງຄົມ, ສາມາດໂຄສະນາ ເຜີຍແຜ່ໄດ້ຢ່າງເປີດເຜີຍ ແລະ ກວ້າງຂວາງ, ບໍ່ແຕະຕ້ອງເຖິງບັນຫາການເມືອງ, ບໍ່ຕ້ານ ກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍແຫ່ງ ສປປ ລາວ, ບໍ່ຝືນຕໍ່ວັດ ທະນະທຳ, ຮີດຄອງປະເພນີ, ຂະນົບທຳນຽມອັນດີງາມຂອງຊາດລາວ.

## ໝວດທີ III
## ຫລັກການ ແລະ ລະບຽບການກ່ຽວກັບການຂໍອະນຸມັດ ນຳໃຊ້ເນື້ອໃນຂໍ້ມູນ-ຂ່າວສານ

**ມາດຕາ 5**: ບຸກຄົນ, ການຈັດຕັ້ງ ຫລື ນິຕິບຸກຄົນທີ່ເປັນຄົນລາວ ຫລື ຕ່າງປະເທດປະຈຳ ຢູ່ ສປປ ລາວ ມີຈຸດປະສົງຢາກຂໍນຳໃຊ້ ເນື້ອໃນຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ ຕ້ອງ ປະກອບເອກະສານຢ່າງຄົບຖ້ວນ ເພື່ອນຳສະເໜີຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຄົ້ນຄວ້າພິຈາລະນາຕາມລະບຽບການ.

**ມາດຕາ 6**: ລຳດັບການປະກອບເອກະສານ

1) ໃບສະເໜີຂໍອະນຸມັດການນຳໃຊ້ຂໍ້ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ;
2) ເອກະສານທາງການ, ປະຫວັດຫຍໍ້ຂອງບຸກຄົນ, ການຈັດຕັ້ງ ຫລື ນິຕິບຸກຄົນ;
3) ຈຸດປະສົງ, ເປົ້າໝາຍ, ແຜນການ ລາຍການ ແລະ ປະເພດຂໍ້ມູນຂ່າວສານ;
4) ສຳລັບອົງການຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ມີສຳນັກງານຕັ້ງຢູ່ ສປປ ລາວ ມີຈຸດປະສົງຢາກນຳໃຊ້ຂໍ້ມູນຂ່າວສານຜ່ານລະບົບອິນເຕີແນັດ ຈະຕ້ອງມີການ ຢັ້ງຢືນຮັບຮູ້ຈາກ ກະຊວງ ການຕ່າງປະເທດ ແຫ່ງ ສປປ ລາວ ຫລື ອົງການຂອງລັດທີ່ ກ່ຽວຂ້ອງ.

**ມາດຕາ 7**: ລະບຽບການອະນຸມັດ:

1) ໄລຍະ 15 ວັນ ນັບແຕ່ມື້ທີ່ໄດ້ຮັບໃບສະເໜີ ແລະ ເອກະສານປະກອບຂໍນຳໃຊ້ຂໍ້ ມູນ-ຂ່າວສານ ຜ່ານລະບົບອິນເຕີແນັດ, ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ຄົ້ນຄວ້າ ແລະ ອອກໃບອະນຸຍາດ. ກໍລະນີທີ່ບໍ່ສາມາດອອກໃບອະນຸຍາດໃຫ້, ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ຈະຕອບໃຫ້ຊາບຢ່າງເປັນລາຍລັກອັກສອນ;

2) ພາຍຫລັງທີ່ໄດ້ມີໃບອະນຸຍາດ ຈາກ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳແລ້ວ ບຸກ ຄົນ, ການຈັດຕັ້ງ ຫລື ນິຕິບຸກຄົນ ຕ້ອງນຳເອົາເອກະສານຕ່າງໆ ໄປສະເໜີຕໍ່ກະຊວງ ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ພິຈາລະນາ ແລະ ໃຫ້ການອະນຸມັດດ້ານ ລະບຽບການ ແລະ ວິທີການດ້ານເຕັກນິກ;

3) ກໍລະນີຢາກປ່ຽນແປງ ຫລື ເພີ່ມເຕີມຂໍ້ມູນໃດໜຶ່ງໃນໃບອະນຸຍາດ ຕ້ອງໄດ້ຮັບຄວາມ ເຫັນດີ ຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເສັຍກ່ອນ.

## ໝວດທີ IV
## ຂໍ້ເກືອດຫ້າມ ແລະ ມາດຕະການ

**ມາດຕາ 8: ຂໍ້ເກືອດຫ້າມ:**

1) ຫ້າມນຳໃຊ້ຂໍ້ມູນ-ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ;

2) ຫ້າມການນຳໃຊ້ຂໍ້ມູນ-ຂ່າວສານ ທີ່ບໍ່ຖືກຕ້ອງຕາມຂໍ້ກຳນົດ, ກົດລະບຽບ ຊຶ່ງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ວາງອອກ;

3) ຫ້າມການມອບໂອນໃບອະນຸຍາດ ຫລື ເອົາໃບອະນຸຍາດ ໃຫ້ຜູ້ອື່ນນຳໃຊ້.

**ມາດຕາ 9: ມາດຕະການ:**

ບຸກຄົນ, ອົງການຈັດຕັ້ງ ຫລື ນິຕິບຸກຄົນໃດ ທີ່ນຳໃຊ້ຂໍ້ມູນຂ່າວສານ ຜ່ານລະບົບ ອິນເຕີແນັດ ຫາກມີການລ່ວງລະເມີດຕໍ່ຂໍ້ກຳນົດສະບັບນີ້ ໂດຍອີງຕາມລະດັບຂອງການ ລ່ວງລະເມີດ ຈະຖືກປັບໃໝລົງໂທດ ຕາມລະບຽບກົດໝາຍສະຖານໜັກ ຫລື ເບົາ ຫລື ຖືກຖອນໃບອະນຸຍາດນຳໃຊ້ຂໍ້ມູນຂ່າວສານ.

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ກວດກາ ແລະ ສະເໜີ ນຳ ໃຊ້ມາດຕະການລົງໂທດ ຕໍ່ຜູ້ລ່ວງລະເມີດໃນຂອບເຂດທົ່ວປະເທດ.

## ໝວດທີ V
## ການຈັດຕັ້ງປະຕິບັດ

**ມາດຕາ 10:** ມອບໃຫ້ກົມຄຸ້ມຄອງສື່ມວນຊົນ ປະສານສົບທົບກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 11:** ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າມີການປ່ຽນແປງໃໝ່.

ວຽງຈັນ,ວັນທີ 21 / 5 / 1998

ຕ. ລັດຖະມົນຕີວ່າການ

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ

**ບົວບານ ວໍລະຂຸນ**

( ໄດ້ເຊັນ ແລະ ຕີຕາແລ້ວ )